**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 196/ນຍ

ນະຄອນຫຼວງວຽງຈັນ, ວັນທີ 24.06.2016.

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທະນາຄານແຫ່ງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ(ສະບັບປັບປຸງ) ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ກົດໝາຍວ່າດ້ວຍການດັດແປງກົດໝາຍ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ໃບສະເໜີຂອງທະນາຄານແຫ່ງ ສປປ ລາວ ເລກທີ 229/ທຫລ, ລົງວັນທີ 11 ມິຖຸນາ 2015 ແລະ ໜັງສືສະເໜີຂອງຫ້ອງການທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 36/ຫກ, ລົງວັນທີ 10 ກຸມພາ 2016;
- ອີງຕາມ ໃບສະເໜີຂອງກະຊວງພາຍໃນ ສະບັບເລກທີ 132/ພນ, ລົງວັນທີ 06 ພຶດສະພາ 2016.

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງທະນາຄານແຫ່ງ ສປປ ລາວ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ແນໃສ່ການປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານກ່ຽວກັບການຄຸ້ມຄອງມະຫາພາກທາງດ້ານເງິນຕາ ແລະ ປະກອບສ່ວນອັນສຳຄັນໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ພັດທະນາເສດຖະກິດ-ສັງຄົມ ແລະ ສາມາດເຊື່ອມໂຍງພາກພື້ນ ແລະ ສາກົນ

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ທະນາຄານແຫ່ງ ສປປ ລາວ ຂຽນຕົວອັກສອນຫຍໍ້ວ່າ: "ທຫລ" ແມ່ນອົງການລັດທຽບເທົ່າກະຊວງ ຊຶ່ງສັງກັດໃນໂຄງປະກອບກົງຈັກການຈັດຕັ້ງຂອງລັດຖະບານ, ມີຖານະເປັນນິຕິບຸກຄົນ, ເປັນທະນາຄານກາງຂອງປະເທດ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການເປັນສະຖາບັນເງິນຕາຂອງປະເທດ, ຄຸ້ມຄອງມະຫາພາກທາງດ້ານເງິນຕາ, ສິນເຊື່ອ ແລະ ການຊຳລະບັນຊີຂອງທະນາຄານ ໃນຂອບເຂດທົ່ວປະເທດ, ເປັນໃຈກາງບັນຊາທີ່ທັນສະໄໝ, ຮັບປະກັນການບໍລິການທີ່ຄ່ອງແຄ້ວ, ວ່ອງໄວ ແລະ ມີປະສິດ ທິພາບໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ; ລັດຖະບັນຍັດ, ລັດຖະດຳລັດຂອງປະທານປະເທດ; ມະຕິຕົກລົງ, ດຳລັດຂອງລັດຖະບານ; ຂໍ້ຕົກລົງ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ;
2. ສົ່ງເສີມ ແລະ ປົກປັກຮັກສາສະຖຽນລະພາບຂອງເງິນກີບຕໍ່ພາຍໃນ ແລະ ຕ່າງປະເທດ, ຍົກສູງປະສິດທິພາບຂອງກົນໄກຊຳລະ ແລະ ສິນເຊື່ອຂອງ ສປປ ລາວ ເພື່ອເຄື່ອນໄຫວມີປະສິດທິພາບ ແລະ ປອດໄສ;
3. ສົ່ງເສີມ ແລະ ອຳນວຍຄວບຄຸມການເຄື່ອນໄຫວຂອງເງິນຕາ ຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ຂະຫຍາຍຕົວ;
4. ຄົ້ນຄວ້າຮ່າງກົດໝາຍ, ຮ່າງນະໂຍບາຍ ແລະ ແຜນຍຸດທະສາດຂອງຂະແໜງການທະນາຄານ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
5. ຄົ້ນຄວ້າຫັນເອົານະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຂະແໜງການທະນາຄານ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ ໃນຂອບເຂດທົ່ວປະເທດ;
6. ຄົ້ນຄວ້າແຜນນະໂຍບາຍເງິນຕາ ເພື່ອນຳສະເໜີໃຫ້ລັດຖະບານພິຈາລະນາ ແລະ ຈັດຕັ້ງປະຕິບັດແຜນນະໂຍບາຍດັ່ງກ່າວ ໃຫ້ມີປະສິດທິຜົນ;
7. ຄຸ້ມຄອງ ແລະ ດັດສົມບໍລິມາດເງິນຕາ ໃນຂອດຈໍລະຈອນຕາມແຜນການອະນຸມັດຂອງລັດຖະບານ;
8. ປັບປຸງກໍ່ສ້າງລະບົບທະນາຄານຂອງ ສປປ ລາວ ໃຫ້ຂະຫຍາຍຕົວຢ່າງໜັກແໜ້ນເຂັ້ມແຂງ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນ ກໍຄືນັກທຸລະກິດພາຍໃນ ແລະ ຕ່າງປະເທດ, ເສີມຂະຫຍາຍການຮ່ວມມືສາກົນໃນຂົງເຂດວຽກງານທະນາຄານເປັນຢ່າງດີ;

9. ຄຸ້ມຄອງ ແລະ ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ການຂະຫຍາຍຕົວຂອງລະບົບທະນາຄານ ແລະ ສະຖາບັນການເງິນ ດັ່ງກ່າວ;
10. ສ້າງ ແລະ ພັດທະນາເຄື່ອງມື, ລະບົບກົນໄກການຊໍາລະ ໃຫ້ມີຄວາມປອດໄພ ເພື່ອຕອບສະໜອງໄດ້ຄວາມຕ້ອງການໃນການຊໍາລະຂອງພື້ນຖານເສດຖະກິດໃນແຕ່ລະໄລຍະ;
11. ພັດທະນາຕະຫຼາດລະຫວ່າງທະນາຄານໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ;
12. ຄຸ້ມຄອງ ແລະ ບໍລິຫານຄັງສໍາຮອງເງິນຕາຕ່າງປະເທດ ໃຫ້ມີຄວາມປອດໄພ ແລະ ມີປະສິດທິຜົນ;
13. ຄຸ້ມຄອງການຈໍລະຈອນເງິນຕາ ໃນຂອບເຂດທົ່ວປະເທດ;
14. ຄຸ້ມຄອງມະຫາພາກທາງດ້ານເງິນຕາ, ເປັນທະນາຄານຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທັງເປັນຜູ່ໃຫ້ກູ້ຢືມສຸດທ້າຍ ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນດັ່ງກ່າວ ເພື່ອຈຸດປະສົງປະຕິບັດນະໂຍບາຍເງິນຕາ;
15. ປະຕິບັດນະໂຍບາຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ອັດຕາແລກປ່ຽນ;
16. ເກັບກໍາ, ຮວບຮວມ ແລະ ວິໄຈ ຂໍ້ມູນຂ່າວສານທາງດ້ານເສດຖະກິດ-ການເງິນ, ເງິນຕາ ແລະ ການເຄື່ອນໄຫວຂອງທະນາຄານ ແລະ ສະຖາບັນການເງິນຈາກບຸກຄົນ ແລະ ຂະແໜງການທີ່ກ່ຽວຂ້ອງ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຮັບໃຊ້ການວາງນະໂຍບາຍເງິນຕາ ແລະ ວຽກງານທະນາຄານ;
17. ລາຍງານ ແລະ ສະເໜີຄວາມເຫັນກ່ຽວກັບບັນຫາເສດຖະກິດ, ເງິນຕາ, ການທະນາຄານ ໃຫ້ລັດຖະບານຊາບຢ່າງເປັນປົກກະຕິ;
18. ເປັນຕົວແທນໃຫ້ລັດຖະບານຢູ່ໃນອົງການຈັດຕັ້ງການເງິນສາກົນ, ພົວພັນ, ຮ່ວມມື ແລະ ເຊັນສັນຍາກ່ຽວກັບວຽກງານການເງິນ, ເງິນຕາກັບຕ່າງປະເທດ ແລະ ອົງການຈັດຕັ້ງການເງິນສາກົນຕາມການມອບໝາຍຂອງລັດຖະບານ;
19. ບໍລິຫານຊັບສິນຂອງທະນາຄານແຫ່ງ ສປປ ລາວ ໃຫ້ມີຄວາມປອດໄພ ແລະ ມີປະສິດທິຜົນ;
20. ຂຶ້ນແຜນຮັບ ແລະ ບໍາລຸງກໍ່ສ້າງພະນັກງານໃຫ້ມີຄຸນນະພາບ ເພື່ອຕອບສະໜອງໃຫ້ແກ່ວຽກງານທະນາຄານ, ປະຕິບັດນະໂຍບາຍຍ້ອງຍໍຕໍ່ພະນັກງານຜູ່ມີຜົນງານດີເດັ່ນ ແລະ ປະຕິບັດວິໄນຕໍ່ຜູ່ລະເມີດຢ່າງເຄັ່ງຄັດ;
21. ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍໄດ້ກໍານົດໄວ້ ຫຼື ຕາມການມອບໝາຍຂອງລັດຖະບານ.

## ມາດຕາ 4 ຂອບເຂດສິດ

1. ພິມຈໍາໜ່າຍທະນະບັດ ແລະ ເງິນຫຼຽນ ພຽງແຕ່ຜູ່ດຽວ ຕາມການອະນຸມັດຂອງລັດຖະບານ ພ້ອມທັງ;
2. ຈໍາໜ່າຍພັນທະບັດໃນນາມຂອງຕົນ, ຊື້, ຂາຍພັນທະບັດໂດຍກົງກັບທະນາຄານທຸລະກິດ ແລະ ສະຖາບັນການເງິນ ເພື່ອຈຸດປະສົງປະຕິບັດນະໂຍບາຍເງິນຕາ;
3. ສະເໜີລັດຖະບານພິຈາລະນາອະນຸມັດການສ້າງຕັ້ງ ຫຼື ຍຸບເລີກສາຂາຂອງທະນາຄານແຫ່ງ ສປປ ລາວ;
4. ອະນຸມັດການສ້າງຕັ້ງ ຫຼື ຍຸບເລີກທະນາຄານທຸລະກິດພາຍໃນ, ທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມການຕົກລົງຂອງລັດຖະບານ;
5. ນໍາໃຊ້ມາດຕະການຕໍ່ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ລະເມີດລະບຽບກົດໝາຍ;

6. ປະຕິບັດສິດອື່ນໆ ຕາມກົດໝາຍໄດ້ກຳນົດ ຫຼື ຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

ມາດຕາ 5 ໂຄງປະກອບດ້ານກົງຈັກ.

**ກ. ກົງຈັກເສນາທິການຂັ້ນກົມ ປະກອບມີ:**

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາພາຍໃນ;
4. ກົມນະໂຍບາຍເງິນຕາ;
5. ກົມຄຸ້ມຄອງທະນາຄານທຸລະກິດ;
6. ກົມຄຸ້ມຄອງສະຖາບັນການເງິນ;
7. ກົມບໍລິການທະນາຄານ;
8. ກົມຊັບສິນມີຄ່າ;
9. ກົມບັນຊີ ແລະ ການເງິນ;
10. ກົມພິມຈຳໜ່າຍ;
11. ກົມເຕັກໂນໂລຊີຂໍ້ມູນຂ່າວສານ;
12. ກົມນິຕິກຳ;
13. ກົມຄຸ້ມຄອງລະບົບຊຳລະສະສາງ.

**ຂ. ກົງຈັກວິຊາການທີ່ມີຖານະທຽບເທົ່າກົມ ປະກອບມີ:**

1. ສະຖາບັນການທະນາຄານ;
2. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ສຳນັກງານຂໍ້ມູນຕ້ານການຟອກເງິນ;
4. ໂຮງພິມທະນະບັດທະນາຄານແຫ່ງ ສປປ ລາວ;
5. ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້.

ສຳລັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ແມ່ນມີຄວາມເປັນເອກະລາດ ທາງດ້ານການເຄື່ອນໄຫວວຽກງານວິຊາການ ພາຍໃຕ້ການຊີ້ນຳຂອງຄະນະກຳມະການແຫ່ງຊາດ ທີ່ກ່ຽວຂ້ອງກັບວຽກງານດັ່ງກ່າວ. ສ່ວນວຽກງານການເມືອງແນວຄິດ, ວຽກງານຈັດຕັ້ງ, ພັກ-ພະນັກງານ ແລະ ງົບປະມານ ແມ່ນຂຶ້ນກັບ ທະນາຄານແຫ່ງ ສປປ ລາວ.

ຄ. ກົງຈັກຂອງທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນປະກອບມີ:

1. ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ;
2. ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ;
3. ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ;
4. ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ;
5. ສາຂາທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຂວງຈຳປາສັກ.

ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ໂຄງປະກອບດ້ານບຸກຄະລາກອນຂອງທະນາຄານແຫ່ງ ສປປ ລາວ ປະກອບມີ:

1. ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍປະທານປະເທດ, ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ຕາມການຮັບຮອງຂອງສະພາແຫ່ງຊາດ. ທະນາຄານແຫ່ງ ສປປ ລາວ ປະກອບມີຮອງຜູ້ວ່າການຈຳນວນໜຶ່ງ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ.

   ສິດ ແລະ ໜ້າທີ່ ຂອງຜູ້ວ່າການ ແລະ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ແມ່ນໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ.
2. ຫົວໜ້າຫ້ອງການ, ຫົວໜ້າກົມ, ທຽບເທົ່າຫົວໜ້າກົມ ແລະ ຫົວໜ້າສາຂາທະນາຄານແຫ່ງສປປ ລາວ ຢູ່ທ້ອງຖິ່ນ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ;
3. ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ ແລະ ທຽບເທົ່າຮອງຫົວໜ້າກົມ, ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ, ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕາມການສະເໜີຂອງ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ;
4. ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ ແລະ ໄດ້ຮັບການບັນຈຸ, ແຕ່ງຕັ້ງຕາມລະບຽບການ.

## ໝວດທີ IV
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

ມາດຕາ 7 ຫຼັກການ

ທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວວຽກງານຕາມຫຼັກການດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານມີການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;

2. ທຸກການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ແລະ ພະນັກງານ-ລັດຖະກອນທຸກຄົນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນໍາເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ;

### ມາດຕາ 8 ແບບແຜນວິທີເຮັດວຽກ

ທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວວຽກງານຕາມແບບແຜນດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານງານ ແລະ ສົມທົບຢ່າງແໜ້ນແຟ້ນ ກັບທຸກຂະແໜງການທັງສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ ຕາມກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານ ສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈໍາເດືອນ, ສາມເດືອນ, ຫົກເດືອນ ຫຼື ປະຈໍາປີ ແລະ ປະຕິບັດລະບອບລາຍງານ ໃຫ້ຂັ້ນເທິງຂອງຕົນ ແລະ ລັດຖະບານເປັນປົກກະຕິ;
4. ຖືເອົາການຫັນລົງຮາກຖານ ຕິດພັນກັບຕົວຈິງ ເພື່ອປັບປຸງວຽກງານຂອງທະນາຄານໃຫ້ເຂັ້ມແຂງ ແລະ ປອດໃສ.

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 9 ງົບປະມານ ແລະ ກາປະທັບ

ທະນາຄານແຫ່ງ ສປປ ລາວ ມີງົບປະມານກຸ້ມຕົນເອງ ແລະ ມີກາປະທັບຂອງຕົນ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

### ມາດຕາ 10 ການຜັນຂະຫຍາຍ

ມອບໃຫ້ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ສະຖາບັນການທະນາຄານ ແລະ ກິດຈັກທຶນເທົ່າກົມ ແລະ ການຈັດຕັ້ງທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ທີ່ລະບຸໄວ້ໃນມາດຕາ 5 ຂອງດໍາລັດ ສະບັບນີ້ ໃຫ້ລະອຽດ ຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

### ມາດຕາ 11 ການຈັດຕັ້ງປະຕິບັດ

ທະນາຄານແຫ່ງ ສປປ ລາວ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 40/ນຍ, ລົງວັນທີ 06 ເມສາ 2000.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ